UNITED NATIONS NATIONS UNIES

ບົດຂ່າວ 09 ຕຸລາ 2009

# ອົງການ ສປຊ ຕອບ ການຮຽກຮ້ອງຂອງລັດຖະບານລາວ ເພື່ອສະໜັບສະໜູນແກ່ຜົນເສຍຫາຍທີ່ຕາມມາຈາກ ພະຍຸ ເກດສະໜາ

*ວຽງຈັນ, ວັນທີ 9 ຕຸລາ 2009. ອົງການ ສປຊ ໄດ້ເລີ່ມຕົ້ນໃຫ້ການຊ່ວຍເຫຼືອແກ່ບັນດາແຂວງພາກໃຕ້ລາວທີ່ໄດ້ຮັບຜົນກະທົບຈາກ ພະຍຸ ເກດສະໜາ ໃນອາທິດທີ່ຜ່ານມາ, ໂດຍອົງການ ສປຊ ໄດ້ສົ່ງສະບຽງອາຫານ, ນ້ຳດື່ມ ແລະ ເຄື່ອງອະນາໄມໃຫ້ແກ່ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບຈາກລົມ ແລະ ນ້ຳຖ້ວມ ໜັກກ່ວາໝູ່ ຈາກ ພະຍຸ ເກດສະໜາ.*

ໂດຍອີງຕາມ ຄຳຮຽກຮ້ອງຂໍຄວາມຊ່ວຍເຫຼືອຈາກລັດຖະບານ, ອົງການ ສປຊ ໄດ້ປຶກສາຫາລືກັບກະຊວງທີ່ກ່ຽວຂ້ອງຕ່າງໆ ແລະ ຄູ່ຮ່ວມພັດທະນາເພື່ອກຳນົດວິທີທາງ ສຳລັບຄວາມຕ້ອງການສຳລັບການຊ່ວຍເຫຼືອ. ໂດຍປະຈຸບັນ ທາງອົງການ ສປຊ ແມ່ນຍັງມີຄວາມຕ້ອງການ ຂໍ້ມູນທີ່ຖືກຕ້ອງ ແລະ ຊັດເຈນຈາກບັນດາແຂວງທີ່ໄດ້ຮັບຜົນກະທົບໜັກທີ່ສຸດນັ້ນຫຼາຍເທົ່າທີ່ຈະຫຼາຍໄດ້, ສ່ວນການຮ່ວມມືກັນເພື່ອກວດກາລາຍລະອຽດຕ່າງໆ ແມ່ນຄາດວ່າຈະໄດ້ດຳເນີນໃນອາທິດໜ້າ.

ຮັກສາການຂອງຜູ້ຕາງໜ້າອົງການ ສປຊ ປະຈຳລາວ ທ່ານ ມີໄກ ຢາບູຕາ ໄດ້ເວົ້າວ່າ "ມັນເປັນເລື່ອງທີ່ໜ້າເສົ້າຫຼາຍ ເມື່ອໄດ້ເຫັນຂົງເຂດທີ່ປະສົບໄພພິບັດ, ແລະມັນເປັນເລື່ອງທີ່ເກີດຂຶ້ນຊ້ອນກັນໄວຫຼາຍ ນັບແຕ່ນ້ຳຂອງ ຖ້ວມໃນປີ 2008". "ອົງການ ສປຊ ຈະເຮັດທຸກຄວາມສາມາດເພື່ອຊ່ວຍເຫຼືອແກ່ລັດຖະບານ ໃນການນຳຄວາມຊ່ວຍເຫຼືອໃຫ້ກັບຊຸມຊົນ ທີ່ໄດ້ຮັບຜົນກະທົບທີ່ສຸດ."

ອີງຕາມຕົວເລກການຄາດຄະເນລ່າສຸດ ຈາກລັດຖະບານ, ປະຊາຊົນຫຼາຍກ່ວາ 128,000 ຄົນ ກຳລັງຂາດທີ່ຢູ່ອາໄສ, ການທຳມາຫາກິນ ຫຼື ສັບສິນສິນອື່ນໆ ຍ້ອນຖືກນ້ຳຖ້ວມ. ຄາດຄະເນຜົນເສຍຫາຍຕໍ່ກັບພື້ນຖານໂຄງລ່າງ, ເນື້ອທີ່ນາ, ໂຮງຮຽນ, ທຸລະກິດ ແລະ ເຮືອນຊານແລ້ວແມ່ນປະມານ 1,011 ຕື້ກີບ (119 ລ້ານໂດລາສະຫະລັດ).

ຕາງໜ້າລັດຖະບານ, ນຳໂດຍ ທ່ານ ນາຍົກລັດຖະມົນຕີ ພ້ອມດ້ວຍ ບັນດາຜູ້ນຳຂັ້ນສູງ ໄດ້ລົງຢ້ຽມຢາມ ແຂວງທີ່ໄດ້ຮັບຜົນກະທົບໃນຕົ້ນອາທິດນີ້. ລົດບັນທຸກ, ເຮືອ ແລະ ຍົນ ເຮຣີກອບເຕີ ໄດ້ຖືກແຈກຢາຍລົງໄປຊ່ວຍ ໃນການຊ່ວຍເຫຼືອຂັ້ນພື້ນຖານ ສຳລັບຄອບຄົວທີ່ໄດ້ຮັບຜົນກະທົບໜັກທີ່ສຸດ.

ທ່ານ ພົງສະຫວັດ ບຸບຜາ ຮອງລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ໄດ້ລາຍງານຕໍ່ກັບບັນດາສະຖານທູດຕ່າງໆປະຈຳລາວ ໃນວັນສຸກວ່າ "ນ້ຳຖ້ວມໃນຄັ້ງນີ້ ແມ່ນມີຄວາມຮ້າຍແຮງທີ່ສຸດທີ່ເຄີຍພົບ ໃນພາກໃຕ້ລາວ. ທ່ານ ຍັງໄດ້ເວົ້າວ່າ: ຄຽງຄູ່ກັບຜົນເສຍຫາຍ ຕໍ່ກັບການດຳລົງຊີວິດຂອງປະຊາຊົນນັບພັນ, ມັນຍັງສົ່ງຜົນກະທົບຕໍ່ກັບ ເສດຖະກິດ ສັງຄົມ ກໍ່ຄື ໃນການບັນລຸບັນດາເປົ້າໝາຍຕ່າງໆ ຂອງເປົ້າໝາຍສະຫະສະວັດ ດ້ານການພັດທະນາ ຂອງ ສປປ ລາວ.

ຂອງບັນເທົາທຸກທີ່ນຳໄປຊ່ວຍເຫຼືອ ບັນດາແຂວງທີ່ໄດ້ຮັບຜົນກະທົບໜັກທີ່ສຸດ ລວມມີ: ເຂົ້າສານ ຫຼາຍກ່ວາ 100 ໂຕນ, ປ່ອງປາ, ແລະ ເຄື່ອງຂອງອື່ນໆຈາກ ອົງການອາຫານໂລກ (WFP) ໃຫ້ປະມານ 40,000 ຄົນ. ນ້ຳສະອາດ ແມ່ນສິ່ງທີ່ກຳລັງມີຄວາມຕ້ອງການຫຼາຍທີ່ສຸດ, ອົງການ ຢູນີເຊັບ ໄດ້ບໍລິຈາກ ຢາປົວພະຍາດ(chlorine) ແລະ ສະບູອາບ ໃຫ້ແຂວງ ອັດຕະປື, ເຊກອງ ແລະ ສາລະວັນ, ໃນຄະນະທີ່ທາງລັດຖະບານກໍ່ໄດ້ສົ່ງທີມງານຊ່ວຍເຫຼືອເພື່ອກູ້ໄພສຸກເສີນລົງພື້ນທີ່. ກອງທຶນ ເພື່ອປະຊາກອນຂອງອົງການສະຫະປະຊາຊາດ (UNFPA) ໄດ້ຊ່ວຍເຫຼືອ ຖົງອຸປະກອນຮັບໃຊ້ສ່ວນບຸກຄົນ ແລະ ໃຫ້ການສະໜັບສະໜູນແກ່ ກະຊວງສາທາລະນະສຸກ ໃນການກວດກາ ແລະ ຊ່ວຍເຫຼືອ. ສ່ວນການກະກຽມຮັບມື ກັບ ການລະບາດຂອງພະຍາດ ແມ່ນ ໄດ້ຮັບການຊ່ວຍເຫຼືອຈາກ ອົງການອະນາໄມໂລກ ເຊິ່ງລວມມີ ການສະໜອງທາງດ້ານເຕັກນິກ ໃຫ້ກະຊວງໃນການຕິດຕາມຮັກສາ, ລວມທັງຂໍ້ມູນສຳລັບຊຸມຊົນທີ່ໄດ້ຮັບຜົນກະທົບ. ອົງການອາຫານ ແລະ ການກະເສດ (FAO) ໄດ້ປະກອບສ່ວນເກັບກຳ ແລະ ແບ່ງປັນ ຮູບພາບຈາກດາວທຽມ ທີ່ສາມາດນຳໃຊ້ເຂົ້າໃນການປະເມີນຜົນກະທົບ ກໍ່ກັບປະຊາຊົນ, ສັບພະຍາກອນທຳມະຊາດ ແລະ ກະສິກຳ.

ອົງການ ສປຊ ຈະເລັ່ງແນໃສ່ ໃຫ້ຄວາມຊ່ວຍເຫຼືອ ທັງການບັນເທົາທຸກສຸກເສີນແກ່ແຂວງທີ່ໄດ້ຮັບ ຜົນກະທົບ, ລວມທັງເບິ່ງແຍງຄວາມຕ້ອງການທາງດ້ານສຸກຂະພາບ, ກະສິກຳ, ພື້ນຖານໂຄງລ່າງ ແລະ ການດຳລົງຊີວິດ ໃນໄລຍະກາງ ແລະ ໄລຍະຍາວ ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດໃນ ຄັ້ງນີ້.

**ໝາຍເຫດ**:

ສຳລັບຂໍ້ມູນເພີ່ມເຕີມ ກະລູນາຕິດຕໍ່ ໜ່ວຍງານຂ່າວສານ ຂອງ ອົງການ ສປຊ, ວຽງຈັນ, ສປປ ລາວ

**UNITED NATIONS** **NATIONS UNIES**

Janet Pontin (ຫົວໜ້າໜ່ວຍງານ ຂໍ້ມູນຂ່າວສານ), ໂທ: 267777 ຕໍ່. 715, Email: janet.pontin@undp.org
ພຸດສະວົງ ພັດສຸດາ (ພະນັກງານ ປະສານງານ ດ້ານຂໍ້ມູນຂ່າວສານ), ໂທ: 267777 ຕໍ່. 716,
Email: phoutsavong.phatsouda@undp.org

ທີມງານ ສປຊ ໃນ ສປປ ລາວ ມີຄວາມຕັ້ງໃຈ ໃນການສະໜັບສະໜູນລັດຖະບານ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ໂດຍສະເພາະແມ່ນ ຊຸມຊົນ ທີ່ດ້ອຍໂອກາດ ແລະ ອາດມີຜົນກະທົບໄດ້ງ່າຍ. ພວກເຮົາຈະສືບຕໍ່ເຮັດວຽກຢ່າງໃກ້ຊິດ ກັບລັດຖະບານ ແລະ ບັນດາເພື່ອນຮ່ວມພັດທະນາ ເພື່ອບັນລຸເປົ້າໝາຍສະຫະສະວັດດ້ານການພັດທະນາ. ພວກເຮົາ ຈະພະຍາຍາມ ຊ່ວຍເຫຼືອ ປະຊາຊົນລາວ ໃຫ້ປະສົບຜົນສຳເລັດ ແລະ ສາມາດພັດທະນາ ມາດຕະຖານການດຳລົງ
ຊີວິດຂອງທຸກຄົນໃຫ້ໄດ້ຮັບການປັບປຸງດີຂື້ນ.